## ຄຳແນະນຳກ່ຽວກັບການພັດທະນາຕົວເມືອງ

ໃນຫົວຂໍ້ນີ້ ຈະໄດ້ແນະນຳ ກ່ຽວກັບ ກົດໝາຍວ່າດ້ວຍການຜັງເມືອງ ເຊິ່ງເປັນເຄື່ອງມືພື້ນຖານ ທີ່ຕິດພັນກັບວຽກງານການວາງແຜນຜັງ, ການພັດທະນາ, ການຄຸ້ມຄອງ ແລະ ການບໍລິຫານຕົວເມືອງ.

ເນື້ອໃນຂອງຈົດໝາຍຂ່າວສະບັບນີ້ແມ່ນ **ກົດໝາຍວ່າດ້ວຍການຜັງເມືອງ**.

## ປັດໃຈພື້ນຖານສຳລັບການພັດທະນາຕົວເມືອງໃນປະເທດລາວ

ກົດໝາຍສະບັບນີ້ ໄດ້ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ການຕິດຕາມ, ການກວດກາວຽກງານຜັງເມືອງ ເພື່ອເຮັດໃຫ້ວຽກງານດັ່ງກ່າວມີຄວາມຖືກຕ້ອງ ແນ່ໃສ່ຮັບປະກັນການວາງແຜນ ແລະ ການພັດທະນາຕົວເມືອງ ໃຫ້ມີຄວາມສົມດູນ, ຄວາມສະດວກ, ສະຫງົບ, ປອດໄພ, ມີສຸຂະອະນາໄມ, ສວຍງາມ, ເປັນລະບຽບຮຽບຮ້ອຍ, ມີຄວາມສີວິໄລ; ກົດໝາຍສະບັບດັ່ງກ່າວ ໄດ້ປັບປຸງໃນປີ 2017 (ຕາມມະຕິຕົກລົງຂອງສະພາແຫ່ງຊາດ ສະບັບເລກທີ. 40, ລົງວັນທີ 16 ພະຈິກ 2017) ແລະ ໄດ້ຮັບການປັບປຸງເພີ່ມເຕີມອີກຫຼາຍມາດຕາ ຈາກ 54 ມາດຕາໃນສະບັບເກົ່າ ມາເປັນ 98 ມາດຕາ. ສະບັບປັບປຸງລວມມີການເພີ່ມການວາງແຜນຜັງເມືອງຂັ້ນເມືອງ (ມາດຕາ 14), ການກວດກາຄືນການຈັດປະເພດ ແລະ ເນື້ອໃນຂອງການວາງແຜນຜັງເມືອງ ຕາມກົດໝາຍ ແລະ ຂໍ້ກຳນົດລະອຽດ ກ່ຽວກັບຂັ້ນຕອນ (ມາດຕາ 15-48) ແລະ ຂໍ້ຫ້າມ (ມາດຕາ 66-69). ທ່ານສາມາດຊອກຫາຂໍ້ມູນເພີ່ມເຕີມໄດ້ໃນເວັບຂໍ້ມູນ VirGo.



ກົດໝາຍວ່າດ້ວຍການຜັງເມືອງ (ສະບັບປັບປຸງ) ເລກທີ. 40 2017

## ລາຍງານ ກອງປະຊຸມ ການຈັດຕັ້ງກົນໄກການປະສານງານ ເພື່ອການຄຸ້ມຄອງຕົວເມືອງ (UMP) ຄັ້ງທີ 7 ແລະ 8

### ການພັດທະນາຕົວເມືອງແບບມີສ່ວນຮ່ວມ ແລະ ການດຳເນີນງານຂອງ UMP ແລະ VirGo ແບບຍືນຍົງ



ກະຊວງ ໂຍທາທິການ ແລະ ຂົນສົ່ງ ໄດ້ຈັດກອງປະຊຸມ UMP ຄັ້ງທີ 7 ແລະ 8 ຂຶ້ນ ເພື່ອປຶກສາຫາລື ກ່ຽວກັບການພັດທະນາຕົວເມືອງແບບມີສ່ວນຮ່ວມ ຢູ່ນະຄອນຫຼວງວຽງຈັນ, ເຊິ່ງມີຜູ້ເຂົ້າຮ່ວມຈາກບັນດາກະຊວງທີ່ກ່ຽວຂ້ອງເຊັ່ນ: ກະຊວງ ແຜນການ ແລະ ການລົງທຶນ, ກະຊວງ ເຕັກໂນໂລຊີ ແລະ ການສື່ສານ, ນະຄອນຫຼວງວຽງຈັນ, ມະຫາວິທະຍາໄລແຫ່ງຊາດລາວ (ມຊ), ລັດວິສາຫະກິດລົດໄຟແຫ່ງຊາດລາວ, ສະມາຄົມ ແລະ ບໍລິສັດເອກະຊົນຫຼາຍກວ່າ 15 ບໍລິສັດ. ນອກຈາກນັ້ນ, ໃນກອງປະຊຸມຄັ້ງທີ 8 ກໍ່ຍັງມີອົງການ UN-Habitat, ESCAP ແລະ JICA ເຂົ້າຮ່ວມເຊັ່ນດຽວກັນ ແລະ ໃນກອງປະຊຸມດັ່ງກ່າວກໍ່ຍັງໄດ້ມີການປຶກສາຫາລືກັນ ກ່ຽວກັບການດຳເນີນງານຂອງ UMP ແລະ VirGo ແບບຍືນຍົງ ແລະ ຍັງໄດ້ນຳສະເໜີກຳນົດໝາຍໜ້າວຽກ (TOR) ສຳລັບການຈັດຕັ້ງປະຕິບັດ UMP ໃນອະນາຄົດອີກດ້ວຍ. ການປຶກສາຫາລືຢ່າງຕັ້ງໜ້າ ແມ່ນຈະໄດ້ສືບຕໍ່ໃນ UMP ຄັ້ງຕໍ່ໆໄປ ໂດຍອີງໃສ່ກຳນົດໝາຍໜ້າວຽກ (TOR) ສະບັບປັບປຸງ.

ການຮັບຮູ້: ຂໍຂອບໃຈທຸກທ່ານທີ່ອ່ານຈົດໝາຍຂ່າວບ້ານເຮົາ ພາຍໃຕ້ການເຜີຍແຜ່ໂດຍການຮ່ວມມືລະຫວ່າງ ກະຊວງ ໂຍທາທິການ ແລະ ຂົນສົ່ງ ແລະ ໂຄງການ JICA CDUDCP ແລະ ຈົດໝາຍຂ່າວສະບັບນີ້ຈະເປັນສະບັບສຸດທ້າຍທີ່ໄດ້ຈັດພິມເຜີຍແຜ່ໃນຕະຫຼອດໄລຍະເວລາຂອງໂຄງການ. ແຕ່ວ່າ ກະຊວງ ໂຍທາທິການ ແລະ ຂົນສົ່ງ ຈະຍັງສືບຕໍ່ໃນການເຜີຍແຜ່ຂໍ້ມູນຂ່າວສານ ກ່ຽວກັບການພັດທະນາຕົວເມືອງ ຜ່ານເວັບຂໍ້ມູນ 'VirGo'. ພວກເຮົາຫວັງຢ່າງຍິ່ງວ່າຈະຍັງໄດ້ຮັບການສະໜັບສະໜູນຈາກທ່ານ.

ທ່ານສາມາດອ່ານສະບັບເອເລັກໂຕຣນິກໄດ້ທີ່ນີ້ →

ດັດແກ້ ແລະ ຈັດພິມໂດຍ: ກອງເລຂາ ການຈັດຕັ້ງກົນໄກການປະສານງານ ເພື່ອການຄຸ້ມຄອງຕົວເມືອງ
ump.secretariat.laos@gmail.com

UMP NEWSLETTER

# ບ້ານເຮົາ

7 8

ລວມສະບັບທີ 7 ແລະ 8 / ມິຖຸນາ 2024

**'ບ້ານເຮົາ'ແມ່ນຫຍັງ?**

ບ້ານເຮົາ ແມ່ນຈົດໝາຍຂ່າວທີ່ສະໜອງຂໍ້ມູນກ່ຽວກັບ ການພັດທະນາຕົວເມືອງ ໃນນະຄອນຫຼວງວຽງຈັນ ແລະ ເຂດຖັດໄປ. ນອກຈາກນັ້ນ, ຈົດໝາຍຂ່າວບໍ່ພຽງແຕ່ຕີພິມຂ່າວສານສຳລັບຜູ້ປະກອບອາຊີບໃນຂະແໜງສະຖາປັດຕະຍະກຳ ແລະ ການວາງແຜນຜັງເມືອງເທົ່ານັ້ນ ຫາກຍັງເປັນຂໍ້ມູນຂ່າວສານສຳລັບຜູ້ທີ່ມີຄວາມສົນໃຈໃນການພັດທະນາຕົວເມືອງອີກດ້ວຍ.


Playing in the temple Photo by Nok

**ເນື້ອໃນຫຼັກ**

# ການລິເລີ່ມທີ່ຍືນຍົງ ສຳລັບ "ບ້ານເຮົາ"

## ການພັດທະນາຕົວເມືອງແບບຍືນຍົງ ເພື່ອນະຄອນຫຼວງວຽງຈັນ ໃນອະນາຄົດ.

ການພັດທະນາຕົວເມືອງ ແມ່ນການລິເລີ່ມຈາກແນວຄິດຂອງບຸກຄົນເທື່ອລະກ້າວ. ມັນບໍ່ແມ່ນພຽງແຕ່ວຽກງານຂອງພາກລັດ ທີ່ຕ້ອງໄດ້ອອກນະໂຍບາຍ ແລະ ລະບຽບການທີ່ເຂັ້ມງວດ ເພື່ອປັບປຸງຕົວເມືອງເທົ່ານັ້ນ, ແຕ່ມັນຍັງແມ່ນການຮ່ວມມືກັນຢ່າງໜັກແໜ້ນ ລະຫວ່າງ ຊຸມຊົນ ແລະ ເອກະຊົນອີກດ້ວຍ. ແຕ່ລະພາກສ່ວນມີບົດບາດຄື: ຊຸມຊົນອາດຈະຮ່ວມມືກັນຢ່າງຕັ້ງໜ້າ, ພາກເອກະຊົນອາດຈະພັດທະນາທຸລະກິດຂອງຕົນເພື່ອສ້າງວຽກເຮັດງານທຳ ແລະ ບາງຄັ້ງກໍ່ຮ່ວມມືກັບພາກລັດເພື່ອສະໜອງ ແລະ ປັບປຸງການບໍລິການສາທາລະນະ ມັນແມ່ນຂະບວນການຢ່າງຕໍ່ເນື່ອງ ທີ່ມາຈາກການປະຕິບັດປະຈຳວັນ ແລະ ວິໄສທັດຮ່ວມກັນສຳລັບຕົວເມືອງທີ່ດີຂຶ້ນ. ມີຫຼາຍຢ່າງທີ່ພວກເຮົາສາມາດເຮັດໄດ້ ເພື່ອເຮັດໃຫ້ 'ບ້ານເຮົາ'ມີຄວາມຍືນຍົງ.

# ການພັດທະນາຕົວເມືອງແບບຍືນຍົງ: ການສະທ້ອນເຖິງຄວາມພະຍາຍາມໃນອະດີດ ແລະ ການຄາດຄະເນອະນາຄົດ

ນີ້ແມ່ນບາງຂໍ້ລິເລີ່ມການພັດທະນາຕົວເມືອງໃນໄລຍະຊຸມປີທີ່ຜ່ານມາ, ເຊິ່ງຖືເປັນບາດກ້າວທີ່ສຳຄັນ ທີ່ຈະເຮັດໃຫ້ກ້າວໜ້າຕໍ່ໄປຢ່າງໝັ້ນຄົງ.

## ✓ UMP ແລະ GISPF ‘VirGo’




**ຜົນໄດ້ຮັບ:**

ກົນໄກການປະສານງານ ເພື່ອການຄຸ້ມຄອງຕົວເມືອງ (UMP) ໄດ້ຖືກສ້າງຕັ້ງຂຶ້ນ ເພື່ອເປັນກົນໄກໃຫ້ຜູ້ມີສ່ວນຮ່ວມ ໃນການແລກປ່ຽນຄຳຄິດເຫັນ ແລະ ແນວຄິດໃນການພັດທະນາຕົວເມືອງ. ນອກຈາກນີ້, ລະບົບການແບ່ງປັນຂໍ້ມູນ VirGo ກໍ່ຍັງຊ່ວຍໃຫ້ເຂົ້າເຖິງລະບຽບການຕ່າງໆ ທີ່ຈຳເປັນໄດ້ຢ່າງງ່າຍດາຍ.

**ພາລະບົດບາດ:**

☐ **ລັດຖະບານ**: ໂດຍຜ່ານການຈັດຕັ້ງ UMP ແລະ ເວັບຂໍ້ມູນ VirGo, ຈະສືບຕໍ່ໃນການສະໜອງຂໍ້ມູນຂ່າວສານ ແລະ ໂອກາດການມີສ່ວນຮ່ວມ ໃນການພັດທະນາຕົວເມືອງ ຂອງພາກເອກະຊົນ ແລະ ຊຸມຊົນ.
☐ **ພາກເອກະຊົນ**: ສືບຕໍ່ໃນການເຂົ້າຮ່ວມ UMP, ນຳໃຊ້ເວັບຂໍ້ມູນ VirGo ແລະ ການສະໜອງຂໍ້ມູນ
☐ **ຊຸມຊົນ**: ສືບຕໍ່ໃນການເຂົ້າຮ່ວມ UMP, ນຳໃຊ້ເວັບຂໍ້ມູນ VirGo ແລະ ສຶກສາຂໍ້ມູນຂ່າວສານໃຫ້ມີຄວາມເຂົ້າໃຈ.

## ✓ ການພັດທະນາຕົວເມືອງແບບມີສ່ວນຮ່ວມ





**ຜົນໄດ້ຮັບ:**

ໄດ້ນຳສະເໜີແນວຄິດການພັດທະນາຕົວເມືອງແບບມີສ່ວນຮ່ວມ, ເຊິ່ງເປັນແນວຄິດໃໝ່ຢູ່ໃນປະເທດລາວ ແລະ ພາຍຫຼັງໄດ້ມີການສົນທະນາປຶກສາຫາລືກັນຫຼາຍຄັ້ງ ລະຫວ່າງ ພາກລັດ, ເອກະຊົນ, ຊຸມຊົນ ແລະ ວິຊາການ ກ່ຽວກັບແນວທາງທີ່ເໝາະສົມ ສຳລັບປະເທດລາວ, ເຊິ່ງມັນໄດ້ຖືກຮຽບຮຽງໃຫ້ອອກມາເປັນບົດແນະນຳສຳລັບການພັດທະນາຕົວເມືອງແບບມີສ່ວນຮ່ວມ.

**ພາລະບົດບາດ:**

☐ **ລັດຖະບານ**: ສືບຕໍ່ໃນການສົນທະນາປຶກສາຫາລື, ວາງແນວທາງການປະຕິບັດທີ່ເປັນທາງການ, ເຜີຍແຜ່ລາຍຊື່ໂຄງການ ແລະ ຈັດຕັ້ງການສົ່ງເສີມໂຄງການ.
☐ **ພາກເອກະຊົນ**: ສະເໜີແນວຄິດດ້ານທຸລະກິດ ແລະ ເຂົ້າຮ່ວມໂຄງການ ຕາມແນວທາງບົດແນະນຳ.
☐ **ຊຸມຊົນ**: ສ້າງຄວາມເຂົ້າໃຈ, ໃຫ້ການຮ່ວມມື, ເຂົ້າຮ່ວມໃນກິດຈະກຳການພັດທະນາຕົວເມືອງ ແລະ ໃຫ້ການສະໜອງຂໍ້ມູນທີ່ຈຳເປັນ.

## ✓ ລະບົບການອອກອະນຸຍາດປຸກສ້າງ ແລະ ກົດຄວບຄຸມອາຄານ






**ຜົນໄດ້ຮັບ:**

ການດຳເນີນງານທີ່ມີປະສິດພາບ ແລະ ປະສິດທິຜົນ ຂອງລະບົບການອອກອະນຸຍາດປຸກສ້າງ ແລະ ຮ່າງກົດຄວບຄຸມອາຄານໄດ້ມີການປຶກສາຫາລື ເພື່ອຄວາມປອດໄພ ແລະ ສະດວກສະບາຍໃນການພັດທະນາຕົວເມືອງ ແລະ ໄດ້ດຳເນີນການ ໃນການປູກຈິດສຳນຶກສ້າງຄວາມຮັບຮູ້ ແລະ ຄວາມເຂົ້າໃຈ ໃຫ້ແກ່ປະຊາຊົນ.

**ພາລະບົດບາດ:**

☐ **ລັດຖະບານ**: ອະນຸມັດ ແລະ ຈັດຕັ້ງປະຕິບັດລະບົບການອອກອະນຸຍາດປຸກສ້າງທີ່ມີປະສິດທິພາບ, ກົດຄວບຄຸມອາຄານ ແລະ ລະບຽບການຈັດຕັ້ງປະຕິບັດ, ສ້າງຄວາມຮັບຮູ້ ແລະ ຮັບປະກັນການປະຕິບັດຕາມລະບຽບຢ່າງຖືກຕ້ອງ.
☐ **ພາກເອກະຊົນ**: ສ້າງຄວາມເຂົ້າໃຈ ແລະ ປະຕິບັດຕາມລະບຽບການ ແລະ ຂໍ້ກຳນົດທີ່ກ່ຽວຂ້ອງ.
☐ **ຊຸມຊົນ**: ສ້າງຄວາມເຂົ້າໃຈ ແລະ ປະຕິບັດຕາມລະບຽບການ ແລະ ຂໍ້ກຳນົດທີ່ກ່ຽວຂ້ອງ.

# ບົດແນະນຳ ສຳລັບການສົ່ງເສີມ ການພັດທະນາຕົວເມືອງ ແບບມີສ່ວນຮ່ວມ ຢູ່ນະຄອນຫຼວງວຽງຈັນ, ມິຖຸນາ 2024




ຮ່າງບົດແນະນຳສະບັບນີ້ ໄດ້ສ້າງຂຶ້ນ ໂດຍອີງໃສ່ຜົນຂອງການປຶກສາຫາລືໃນກອງປະຊຸມ UMP ແລະ ກອງປະຊຸມກັບຜູ້ມີສ່ວນຮ່ວມ ໂດຍການນຳພາຂອງກະຊວງ ໂຍທາທິການ ແລະ ຂົນສົ່ງ. ພວກເຮົາມາເບິ່ງກັນວ່າ ໂຄງຮ່າງຂອງບົດແນະນຳນີ້ມີຫຍັງແດ່.

## ຍ້ອນຫຍັງພວກເຮົາຈຶ່ງຕ້ອງເຮັດວຽກຮ່ວມກັນ ໃນການພັດທະນາຕົວເມືອງແບບມີສ່ວນຮ່ວມ ?

ການພັດທະນາຕົວເມືອງແບບມີສ່ວນຮ່ວມ ມີຈຸດປະສົງເພື່ອສະໜອງການບໍລິການສາທາລະນະໃຫ້ດີຂຶ້ນ ໂດຍອາໄສຄວາມຮູ້ວິທີການຂອງຜູ້ປະກອບການເອກະຊົນ. ລັດຖະບານ, ພາກເອກະຊົນ ແລະ ຊຸມຊົນ ເຮັດວຽກຮ່ວມກັນ ໃນການສ້າງ, ບຳລຸງຮັກສາ ແລະ ດຳເນີນງານສະຖານທີ່ອຳນວຍຄວາມສະດວກສາທາລະນະ ແລະ ການບໍລິການ ເພື່ອນຳໃຊ້ຊັບພະຍາກອນຢ່າງມີປະສິດທິພາບ ແລະ ປັບປຸງການດຳເນີນງານໃຫ້ດີຂຶ້ນ ເຊິ່ງມັນສາມາດນຳໄປສູ່ການສ້າງສະພາບແວດລ້ອມທີ່ສະດວກສະບາຍ, ການສ້າງທຸລະກິດໃໝ່ ແລະ ການສ້າງວຽກເຮັດງານທຳ ແລະ ເພີ່ມມູນຄ່າຂອງພື້ນທີ່.




ແຫຼ່ງຂໍ້ມູນ: ບົດແນະນຳ ສຳລັບການສົ່ງເສີມ ການພັດທະນາຕົວເມືອງ ແບບມີສ່ວນຮ່ວມ ຢູ່ນະຄອນຫຼວງວຽງຈັນ (ຮ່າງ), ມິຖຸນາ 2024

## ຈຸດປະສົງຂອງບົດແນະນຳນີ້ແມ່ນຫຍັງ ?

ບົດແນະນຳນີ້ມີ 2 ຈຸດປະສົງຫຼັກຄື:

1. ເພື່ອແນະນຳການມີສ່ວນຮ່ວມຂອງພາກສ່ວນເອກະຊົນ ແລະ ຊຸມຊົນ ເຂົ້າໃນການວາງແຜນຜັງເມືອງ ແລະ ໂຄງການພັດທະນາຕົວເມືອງ.
2. ເພື່ອແນະນຳບັນດາມາດຕະການ ແລະ ຍຸດທະສາດໃນການຈັດຕັ້ງປະຕິບັດໂຄງການພັດທະນາຕົວເມືອງແບບມີສ່ວນຮ່ວມ.

## ແມ່ນໃຜຈະເປັນຜູ້ນຳໃຊ້ບົດແນະນຳນີ້ ແລະ ຕອນໃດ ?

ບົດແນະນຳນີ້ ແມ່ນຖືກນຳໃຊ້ໂດຍຜູ້ປະກອບການທຸລະກິດເອກະຊົນ, ຊຸມຊົນ/ເຈົ້າຂອງທີ່ດິນ ແລະ ອົງການຈັດຕັ້ງຂອງລັດ ໃນການສົນທະນາປຶກສາຫາລື ກັບຜູ້ມີສ່ວນຮ່ວມ ໃນແຕ່ລະສະພາບການ. ຂັ້ນຕອນດັ່ງຕໍ່ໄປນີ້ ທີ່ຈະຖືກນຳມາໃຊ້ງານ.

| ຂັ້ນຕອນທີ 1 | ຂັ້ນຕອນທີ 2 | ຂັ້ນຕອນທີ 3 | ຂັ້ນຕອນທີ 4 | ຂັ້ນຕອນທີ 5 |
|---|---|---|---|---|
| ສ້າງແຜນແນວຄວາມຄິດຂອງການພັດທະນາພື້ນທີ່ ດ້ວຍການມີສ່ວນຮ່ວມ ຂອງ ພາກສ່ວນເອກະຊົນ ແລະ ຊຸມຊົນ | ຄັດເລືອກຈຸດທີ່ຕັ້ງເປົ້າໝາຍໃນການພັດທະນາຕົວເມືອງແບບມີສ່ວນຮ່ວມ | ເກັບກຳແນວຄວາມຄິດຈາກພາກສ່ວນເອກະຊົນຕໍ່ກັບ ບັນດາໂຄງການພັດທະນາຕົວເມືອງແບບມີສ່ວນຮ່ວມ | ຈຳແນກປະເພດການພັດທະນາຕົວເມືອງແບບມີສ່ວນຮ່ວມ | ກະກຽມການຈັດຕັ້ງປະຕິບັດການພັດທະນາຕົວເມືອງແບບມີສ່ວນຮ່ວມ |

ແຫຼ່ງຂໍ້ມູນ: ບົດແນະນຳ ສຳລັບການສົ່ງເສີມ ການພັດທະນາຕົວເມືອງ ແບບມີສ່ວນຮ່ວມ ຢູ່ນະຄອນຫຼວງວຽງຈັນ (ຮ່າງ), ມິຖຸນາ 2024

ຂໍ້ມູນທີ່ກ່າວມານັ້ນ ຈະໄດ້ອັບໂຫຼດລົງໃນເວັບຂໍ້ມູນ VirGo ໃນອະນາຄົດອັນໃກ້ນີ້.

https://virgo.mpwt.gov.la

**ທ່ານຢາກຮູ້ຂໍ້ມູນເພີ່ມເຕີມບໍ່?**